


ຮຽບຮຽງໂດຍ: ຄຸດ ວິໄຊພິນ· ແຕ້ມໂດຍ: ສີສຸພັນ ອິນທະວົງ

# ສົງຄາມຂອງຕັກແຕນ

## ແລະເລື່ອງອື່ນໆ

ສົງຄາມຂອງຕັກແຕນ ແລະ ເລື່ອງອື່ນໆ

ພິມຄັ້ງທີ 1

ຮຽບຮຽງໂດຍ: ຄຸດ ວິໄຊພົນ
ຮູບແຕ້ມໂດຍ: ສີສຸພັນ ອິນທະວົງ
ສະຫງວນລິຂະສິດ ບົດຂຽນ © 2006 ຄຸດ ວິໄຊພົນ
ສະຫງວນລິຂະສິດ ຮູບ © 2006 ສີສຸພັນ ອິນທະວົງ
ບັນນາທິການ: ສົມພຽນ ພົງສະຫວັດມີໄຊ

ທະບຽນອະນຸຍາດ: ລທບ 160/ພຈ 23082006
ຈັດພິມໂດຍ: ຮ້ານປຶ້ມອ້າຍໜູນ້ອຍ, ຫລວງພະບາງ
ພິມທີ່ ໂຮງພິມປານຄຳ ໄຮເທັກ, ວຽງຈັນ, 2006
ຈຳນວນ 6000 ຫົວ

The Grasshopper War, and other stories
retold by Khout Visayphone
published by Big Brother Mouse, Luang Prabang, Lao PDR
www.BigBrotherMouse.com
This telling of stories copyright © 2006 by Khout Visayphone
Illustrations copyright © 2006 by Sisouphanh Intavong
Editor: Somphien Phongsavathmixai
All rights reserved.
First printing, first edition, September 2006

# ສົງຄາມ ຂອງ ຕັກແຕນ

## ແລະເລື່ອງອື່ນໆ

ຮຽບຮຽງໂດຍ:
ຖຸດ ວິໄຊພິນ
ແຕ້ມໂດຍ:
ສີສຸພັນ ອິນທະວົງ





ປື້ມອ່ານງ່າຍ ແລະ ມ່ວນຂອງອ້າຍໜູນ້ອຍ



# ໑ ສິງຄານຂອງຕັກແຕນ

ລີງກິນໄດ້ທັງຜັກ, ໝາກໄມ້, ແມງໄມ້, ແມງບົ້ງ, ດ້ວງ, ຊີ້ນ ແລະ ອື່ນໆ ຄືກັນກັບຄົນເຮົາ.

ແຕ່ກີ້ແຕ່ກ່ອນ ມີທົ່ງຫຍ້າອັນກວ້າງໃຫຍ່ແຫ່ງໜຶ່ງ ເຊິ່ງເປັນສະຖານທີ່ຂອງຝູງລີງລົງມາໄລ່ຈັບກິນແມງຕັກແຕນ ເປັນອາຫານເລື້ອຍໆ. ມື້ນຶ່ງ ລີງໄດ້ລົງມາທົ່ງຫຍ້າ ເພື່ອໄລ່ຈັບກິນແມງໄມ້ ແລະ ຕັກແຕນ, ຕັກແຕນມີແຕ່ບິນໜີ ເພາະບໍ່ມີທາງສູ້ກັບລີງ, ລີງເປັນສັດທີ່ໃຫຍ່ກວ່າຕັກແຕນຫຼາຍເທົ່າ. ດັ່ງນັ້ນ ເມື່ອຝູງລີງລົງມາທົ່ງພຽງເທື່ອໃດ ກໍ່ຈະມາໄລ່ຈັບກິນຕັກແຕນ. ຖ້າມາຍາມກາງເວັນກໍ່ໄຄແດ່ ເພາະວ່າໃນຍາມກາງເວັນມີແດດກ້າ, ຕັກແຕນຈະແຂງແຮງ ແລະ ສາມາດບິນໄປໄກໄດ້. ຖ້າພວກມັນມາຕອນເຊົ້າທີ່ມີນ້ຳໝອກຫຼາຍ ຕັກແຕນຈະອ່ອນເພຍ ແລະ ບິນບໍ່ໄດ້. ດັ່ງນັ້ນ ລີງຈິ່ງຈັບຕັກແຕນໄດ້ຢ່າງງ່າຍດາຍ, ຝູງຕັກແຕນກໍ່ມີຈຳນວນໜ້ອຍລົງເລື້ອຍໆ ເພາະວ່າຝູງລີງໄດ້ລົງມາຈັບກິນຕັກແຕນເປັນປະຈຳ ເຮັດໃຫ້ຕັກແຕນເກືອບໝົດໄປທັງຝູງ.



ມື້ນຶ່ງ ຝູງຕັກແຕນຈຶ່ງປະຊຸມກັນວ່າ: "ພວກເຮົາຈະເຮັດແນວໃດກັບຝູງລີງ ເພື່ອຢຸດຕິໃນການເປັນອາຫານຂອງພວກມັນ." ພວກຕັກແຕນຈຶ່ງຕົກລົງເຫັນດີກັນວ່າ: "ຕ້ອງເຮັດສົງຄາມກັບຝູງລີງ ເພາະວ່າແນວໃດພວກເຮົາກໍ່ຈະຕາຍຢູ່ແລ້ວ."

ຫົວໜ້າກອງທັບຂອງຝູງຕັກແຕນ ຈຶ່ງໄປເຈລະຈາກັບຫົວໜ້າຂອງຝູງລີງວ່າ: "ພວກເຮົາຈະຕ້ອງນັດພົບເພື່ອເຮັດສົງຄາມໃນມື້ອື່ນທີ່ທົ່ງຫຍ້າແຫ່ງນີ້. ຖ້າວ່າພວກຂ້ອຍບໍ່ຊະນະພວກເຈົ້າ, ພວກຂ້ອຍຈະຍອມໃຫ້ພວກເຈົ້າກິນໂດຍດີ, ພວກເຈົ້າຈະບໍ່ໄດ້ໄລ່ພວກຂ້ອຍອີກ. ພວກເຈົ້າຕົກລົງບໍ່?"

ລີງທັງຫົວທັງຕອບຕັກແຕນວ່າ: "ຮ່າໆໆ! ດີຫຼາຍ, ຕົກລົງ, ບໍ່ມີບັນຫາ. ແນວໃດພວກຂ້ອຍກໍ່ຈະຊະນະພວກເຈົ້າຢູ່ແລ້ວ."

ນັກຮົບຂອງລີງທີ່ຈະມາສູ້ກັບຕັກແຕນມີຈຳນວນ 30,000 ໂຕ, ສ່ວນໂຕແມ່ ແລະ ລູກຂອງມັນຈະບໍ່ໃຫ້ສູ້. ນັກຮົບຂອງຕັກແຕນມີທັງໝົດພຽງແຕ່ 300 ໂຕເທົ່າ

ນັ້ນ.

ຫົວໜ້າລີງໄດ້ສັ່ງໃຫ້ທະຫານເອົາໄມ້ຄ້ອນທີ່ພໍດີມືຄົນລະອັນ ເພື່ອສູ້ກັບຕັກແຕນ. ເມື່ອຮອດມື້ນັດໝາຍກັນ, ລີງກໍ່ຕື່ນແຕ່ເຊົ້າໆ ແລະ ສັ່ງໃຫ້ລີງໂຕໜຶ່ງໄປຖາມຕັກແຕນວ່າ: "ເຮີຍ! ພວກເຈົ້າກຽມພ້ອມແລ້ວບໍ່?"

ຕັກແຕນຕອບວ່າ: "ແດດຍັງບໍ່ທັນກ້າ ພວກຂ້ອຍຍັງບໍ່ທັນແຂງແຮງເທື່ອ."

ລີງກໍ່ກັບໄປບອກກັບຝູງຂອງມັນວ່າ: "ພວກມັນຍັງບໍ່ທັນພ້ອມເທື່ອ." ລີງບາງໂຕໃຈຮ້ອນຄັນມື ຈຶ່ງເວົ້າຂຶ້ນວ່າ: "ກູຢາກຕີຫົວຕັກແຕນເດ໋ເນາະ! ຍາມໃດມັນຈະພ້ອມຫວ໋ະ." ພວກມັນຄັນມື, ລໍຖ້າພວກຕັກແຕນພ້ອມ ແລະ ແຕ່ງຕັ້ງໃຫ້ລີງໂຕໜຶ່ງໄປຖາມອີກ ແຕ່ພວກຕັກແຕນກໍ່ຕອບຄືເກົ່າ. ພວກລີງຄັນແຂ້ວຄັນມື ຄອຍຖ້າເວລາ



ຕັກແຕນຈະພ້ອມ ແລ້ວພວກເຂົາກໍ່ແຕ່ງຕັ້ງກັນໄປຖາມເລື້ອຍໆ...

ເມື່ອຮອດເວລາບ່າຍ 1 ໂມງ ເຊິ່ງມີແສງແດດກ້າ ຕັກແຕນຈຶ່ງຕອບລີງວ່າ: "ພວກເຮົາພ້ອມແລ້ວ, ເຊີນພວກເຈົ້າເຂົ້າມາໄດ້ເລີຍ."

ພວກລີງກໍ່ພາກັນຮ້ອງໂຮເຮ ລຽນກັນເປັນໜ້າກະດານເຂົ້າມາກາງທົ່ງຫຍ້າ, ສ່ວນພວກຕັກແຕນກໍ່ອອກລຸຍ. ພວກເຂົາຈະບິນແຕກກະຈາຍອອກໄປຄົນລະທິດທາງ ແລ້ວບິນໄປຈັບຫົວລີງ

ລີງກໍ່ສັ່ງໃຫ້ໝູ່ຂອງມັນວ່າ: "ສ່ຽວ! ຕັກແຕນຈັບຫົວກູ ຕີມັນໃຫ້ກູແດ່." ສ່ຽວຂອງມັນກໍ່ເອົາໄມ້ຄ້ອນຟາດໃສ່ຕັກແຕນ ທີ່ຈັບຢູ່ຫົວຂອງສ່ຽວໝົດແຮງ ແຕ່ຕັກແຕນຟ້າວບິນຫຼົບອອກໄປທັນທີ ເຮັດໃຫ້ຄ້ອນຖືກຫົວສ່ຽວຕົນເອງດັງ "ໂປກ" ແລ້ວລີງກໍ່ຫຍິ່ງແຂ້ວ ຕາຄ້າງລົ້ມລົງ

ສ່ຽວໂຕທີ່ເອົາຄ້ອນຟາດໃສ່ຫົວນັ້ນກໍ່ຫ້ອງຂຶ້ນວ່າ: "ເຮີຍ! ໂຕນອນຫົວຢູ່ເຮັດຫຍັງຫວ່ະ, ລຸກຂຶ້ນມາຕີຊ່ວຍກັນແນ່!" ຄວາມຈິງແລ້ວແມ່ນລີງຖືກຄ້ອນຕາຍນັ້ນເອງ. ຕັກແຕນກໍ່ສືບຕໍ່ບິນຈັບຫົວລີງໂຕຕໍ່ໆໄປເລື້ອຍໆ. ລີງບາງໂຕທີ່ຢູ່ອ່າວໄກໝູ່ ເມື່ອຕັກແຕນມາຈັບຫົວ ມັນກໍ່ທັບຫົວຕົນເອງຕາຍ ເຮັດໃຫ້ລີງລົ້ມຕາຍໄປເຕັມທົ່ວທົ່ງຫຍ້າ, ຍັງເຫຼືອແຕ່ 2-3 ໂຕເທົ່ານັ້ນ. ເມື່ອເປັນແນວນັ້ນ ລີງຈຶ່ງຍົກມືຍອມແພ້ຕັກແຕນ

ຕັກແຕນຈຶ່ງສັ່ງໃຫ້ລີງວ່າ: "ນັບຕັ້ງແຕ່ນີ້ເປັນຕົ້ນໄປ ພວກເຈົ້າຕ້ອງຂຶ້ນໄປອາໄສຢູ່ເທິງພູຜາປ່າດົງທີ່ຕຶບໜາພຸ້ນ, ຢ່າໄດ້ລົງມາທົ່ງພຽງຈັກເທື່ອອີກ."

ນັບຕັ້ງແຕ່ນັ້ນມາ ຝູງລີງຈຶ່ງຂຶ້ນໄປອາໄສຢູ່ເທິງພູຜາປ່າດົງໃຫຍ່ທີ່ສູງຊັນ, ໂດຍສະເພາະ ພວກມັນມັກໄປນອນຢູ່ຕາມຕົ້ນໄມ້ໃຫຍ່ ໃກ້ກັບນ້ຳຕົກຕາດ ແລະ ບໍ່ລົງມາທົ່ງພຽງຈັກເທື່ອຈົນເຖິງທຸກວັນນີ້.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ